Souphanouvong University Journal of Multidisciplinary Research and Development
2026, Vol. 12, No. 03, 13-22
https://doi.org/10.69692/SUJMRD120313

Factors Affecting Entrepreneurs' Tax Filing Service via the TaxRIS System in Xay district Municipality, Oudomxay Province

Bouchanh XAYYATI [1], Vira ANOLAC [2] and Phayvanh PHOUNNALY[3].

Department of Organizational Resource Management, Souphanouvong University

[1]Correspondence: Bouchanh XAYYATI, Tax office, Oudomxay Province province, Tel: +8562028733387, Email: Xbouachan@gmail.com
[2] Rector's office, Souphanouvong University, Tel: +8562022999923, E-mail: vira_anolac@hotmail.com
[3]Administration office, Rector's office, Souphanouvong University, Tel: +8562022350340, E-mail: phounnaly@gmail.com

Article Info:
Submitted: May 07, 2026
Revised: May 24, 2026
Accepted: June 09, 2026

Abstract

The purposes of study were: 1) to study entrepreneurs' level of opinion on the tax filing service via the TaxRIS system in Xay district Municipality, and 2) to study factors affecting entrepreneurs' tax filing service via the TaxRIS system in Xay district municipality, Oudomxay province. The research population was 180 peoples from entrepreneurs in Xay district municipality, Oudomxay province by using questionnaires as data collection instrument, and statistics were used to analyze frequency, percentage, mean, standard deviation and binary regression.

The research found that: 1) Entrepreneurs in Xay District have a high opinion of the tax filing services provided through the TaxRIS system, with high levels of opinion concerning the information system's success. Their opinion was ranked from highest to lowest score as follows: intention to use, net benefit, system quality, user satisfaction, information quality and service quality. Furthermore, Entrepreneurs in Xay District have a high opinion of acceptance regarding the Information Technology. Their opinion was ranked from highest to lowest score as follows: Performance expectancy, price value, facilitating condition, hedonic motivation, effort expectancy, social influence and habit. 2) Factors affecting entrepreneurs' tax filing service via the TaxRIS system in Xay district municipality, Oudomxay province, consist of seven factors such as: Status, business size, business revenue, system quality, user satisfaction, effort expectancy, social influence, Facilitating Condition and hedonic motivation at a statistical significance level of 0.10. The ordered probit regression model achieved a prediction accuracy of 75.6%.

Keyword: TaxRIS system, information system success, acceptance of information technology

1. ພາກສະເໜີ

ລະບົບ TaxRIS ເປັນລະບົບທີ່ມີຄວາມສາມາດສູງ ສາມາດຮອງຮັບການແຈ້ງພາສີອາກອນຂອງວິສາຫະກິດ ໂດຍເນັ້ນໜັກໃສ່ການຄິດໄລ່ອາກອນແບບອັດຕະໂນມັດ, ການເກັບກຳຂໍ້ມູນ, ການລາຍງານດ້ານສະຖິຕິຕ່າງໆ ທີ່ກ່ຽວຂ້ອງ ເປັນຕົ້ນແມ່ນສະຖິຕິການອອກເລກບັດປະຈຳຕົວ, ການມອບ ແລະ ບໍ່ມອບພັນທະອາກອນ, ການສັງລວມຫົວໜ່ວຍທຸລະກິດ, ການເຂົ້າລະບົບອາກອນມູນຄ່າເພີ່ມ, ການອອກໃບຢັ້ງຢືນ, ການຄົ້ນຄ້ວາຫາຂໍ້ມູນໃນລະບົບ ແລະ ອື່ນໆ ເຊິ່ງປະກອບມີ 7 ພາກສ່ວນຄື: ການຄຸ້ມຄອງຜູ້ເສຍ

Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (http://creativecommons.org/licenses/by-nc-nd/4.0/

ອາກອນ, ການຄຸ້ມຄອງແຈ້ງມອບອາກອນ, ການຄຸ້ມ ຄອງລາຍຮັບສ່ວຍສາອາກອນ, ການຄຸ້ມຄອງກວດກາ ບັນຊີ, ການຄຸ້ມຄອງການເຊື່ອມຕໍ່, ການແຈ້ງການ ແລະ ລາຍການຄຳຮ້ອງສະໝັກບໍລິການລູກຄ້າ (Deparment of Taxation, 2020). ການແຈ້ງມອບອາກອນຂອງຜູ້ ປະກອບການຂອງ ສປປ ລາວ ມີ 2 ຊ່ອງທາງ ຄື: ການ ແຈ້ງມອບອາກອນ ຜ່ານປ່ອງບໍລິການສຳນັກງານສ່ວຍ ສາອາກອນ ໂດຍອອກໃບແຈ້ງມອບອາກອນນຳເຈົ້າໜ້າ ທີ່ສ່ວຍສາອາກອນຢູ່ສຳນັກງານ ແລະ ການແຈ້ງມອບ ອາກອນຜ່ານລະບົບ TaxRIS ໂດຍເປັນການແຈ້ງມອບ ອາກອນດ້ວຍຕົນເອງ ຜ່ານລະບົບ Tax Service ຂອງ ສ່ວຍສາອາກອນ. ເມື່ອຜູ້ມອບອາກອນໄດ້ຮັບໃບແຈ້ງ ມອບອາກອນແລ້ວຈະໄປຊຳລະພັນທະອາກອນຜ່ານ ປ່ອງການໃຫ້ບໍລິການຄັງເງິນແຫ່ງຊາດ, ຜ່ານປ່ອງ ບໍລິການທະນາຄານທຸລະກິດ ແລະ ຜ່ານລະບົບ Mobile Banking ແລະ Internet Banking ຂອງ ທະນາຄານທຸລະກິດ ຕາມລະບຽບການຊຳລະອາກອນ ຜ່ານລະບົບທະນາຄານທີ່ລັດຖະບານ ສປປ ລາວ ກຳຄົ ກະຊວງການເງິນໄດ້ກຳນົດ (Ministry of Finance, 2018).

ປີ 2024 ທີ່ແຂວງອຸດົມໄຊ ໄດ້ສົ່ງເສີມ ແລະ ໃຫ້ຄວາມສຳຄັນໃຫ້ຫ້ອໜ່ວຍທຸລະກິດ ດຳເນີນແຈ້ງ ມອບພັນທະອາກອນຜ່ານລະບົບ TaxRIS ໂດຍລິກ ລ້ຽງໃຫ້ຫ້ອໜ່ວຍທຸລະກິດເຂົ້າມາແຈ້ງມອບອາກອນ ຜ່ານປ່ອງບໍລິການສຳນັກງານສ່ວຍສາອາກອນ ເພື່ອບໍ່ ເປັນຊ່ອງຫວ່າງໃນການຊຳລະພັນທະອາກອນໃຫ້ລັດຫຼ້າ ຊ້າ ເຊິ່ງແຂວງອຸດົມໄຊ ມີຫ້ອໜ່ວຍແຈ້ງມອບພັນທະ ອາກອນຜ່ານລະບົບ TaxRIS ທັງໝົດ 4,859 ຫ້ອໜ່ ວຍ ເທົ່າກັບ 123.64% ທຽບກັບປີ 2023 ເຊິ່ງມີມູນ ຄ່າແຈ້ງມອບອາກອນ 172.64 ຕື້ກີບ ເທົ່າກັບ 137.61% ທຽບກັບປີ 2023 ໂດຍສາມາດເກັບອາກອນ ໄດ້ຜ່ານລະບົບໄດ້ 165.23 ຕື້ກີບ ກວມເອົາ 95.53% ຂອງມູນຄ່າລາຍຮັບສ່ວຍອາກອນທັງໝົດໃນປີ. ໃນນີ້, ເມືອງໄຊ ແຂວງອຸດົມໄຊ ມີຫ້ອໜ່ວຍແຈ້ງມອບພັນທະ ອາກອນຜ່ານລະບົບ TaxRIS ທັງໝົດ 180 ຫ້ອໜ່ວຍ ເຊິ່ງສ່ວນໃຫຍ່ເປັນວິສາຫະກິດຂະໜາດນ້ອຍ, ຂະໜ າດກາງ ແລະ ຂະໜາດໃຫຍ່ ເຊິ່ງມີມູນຄ່າແຈ້ງມອບ ອາກອນ 8.27 ຕື້ກີບ ເທົ່າກັບ 101.43% ທຽບກັບປີ 2023 ໂດຍສາມາດເກັບອາກອນໄດ້ຜ່ານລະບົບ TaxRIS ໄດ້ 8.09 ຕື້ກີບ ກວມເອົາ 97.84% ຂອງມູນ ຄ່າລາຍຮັບສ່ວຍອາກອນທັງໝົດໃນປີ, ສ່ວນສັດສ່ວນ 2.16% ແມ່ນຍັງຄ້າງການຊຳລະອາກອນໃຫ້ ລັດຖະບານ. ເຊິ່ງບັນຫາການຊຳອາການຢູ່ເມືອງໄຊ ແຂວງອຸດົມໄຊ ມາຈາກ: (1) ບັນຫາຜູ້ປະກອບການນຳ ໃຊ້ລະບົບ TaxRIS ບໍ່ມີຄວາມຄ່ອງຕົວ ເຮັດໃຫ້ໄປ ແຈ້ງມອບຜ່ານປ່ອງບໍລິການສຳນັກງານສ່ວຍສາ ອາກອນ; (2) ບັນຫາຜູ້ປະກອບການບໍ່ແຈ້ງມອບ ອາກອນ, ການຊຳລະພັນທະອາກອນຫຼ້າຊ້າ ແລະ ບໍ່ຊຳ ລະອກອນພັນທະອາກອນ. (3) ບັນຫາຜູ້ປະກອບການ ບໍ່ໃຫ້ການຮ່ວມມື ແລະ ບໍ່ຕິດຕັ້ງໂປຣແກຣມລະບົບ ບັນຊີ-ພິມໃບເກັບເງິນອາກອນມູນຄ່າເພີ່ມແບບທັນສະໄ ໝ ເພື່ອເປັນຖານຂໍ້ມູນແຈ້ງມອບອາກອນຜ່ານ TaxRIS (Tax office of Oudomxay Province, 2024).

ລະບົບ TaxRIS ເປັນລະບົບການໃຊ້ງານ ແລະ ການເຮັດວຽກງານທາງອິນເຕີເນັດ ທີ່ກ່ຽວຂ້ອງກັບອົງ ກອນທຸລະກິດ ໂດຍເປັນລະບົບອັດຄວາມສຳເລັດຂອງ ເຕັກໂນໂລຊີຂໍ້ມູນຂ່າວສານຄຸ້ມຄອງລາຍຮັບສ່ວຍສາ ອາກອນ ເຊິ່ງການຄົ້ນຄວ້າຂອງ Khainoo (2021), Nuttaro (2020) ແລະ Thammachalern et al. (2025) ໄດ້ວັດລະບົບຄວາມສຳເລັດຂອງເຕັກໂນໂລຊີ ຂໍ້ມູນຂ່າວສານຄຸ້ມຄອງລາຍຮັບສ່ວຍສາອາກອນ ຕ້ອງ ປະກອບມີ 5 ດ້ານ ຄື: ຄຸນນະພາບຂອງລະບົບ, ຄຸນ ນະພາບຂອງຂໍ້ມູນຂ່າວສານ, ຄຸນນະພາບການໃຫ້ ບໍລິການ, ຄວາມຕັ້ງໃຈໃນການໃຊ້, ຄວາມພໍໃຈໃນການ ໃຊ້ງານ ແລະ ປະໂຫຍດຂອງການໃຊ້. ນອກຈາກນັ້ນ, ລະບົບ TaxRIS ຈະເປັນທີ່ຍອມຮັບຂອງອົງກອນທຸລະ ກິດ ເພື່ອໃຫ້ເກີດຄວາມຕັ້ງໃຈ ແລະ ພຶດຕິກຳການໃຊ້ ເຕັກໂນໂລຊີຂອງຜູ້ໃຊ້ບໍລິການໄດ້ດີເພີ່ມຂຶ້ນ ເຊິ່ງການ ຄົ້ນຄວ້າຂອງ Nontakhun (2018) ແລະ Kongkeaw(2023) ໄດ້ວັດການຍອມຮັບເຕັກໂນໂລຊີ ຂໍ້ມູນຂ່າວສານ ປະກອບມີ 7 ດ້ານ ຄື: ດ້ານຄວາມຄາດ ຫວັງເຖິງປະສິດທິພາບ, ດ້ານຄາດຫວັງການໃຊ້ງານງ່າຍ, ດ້ານອິດທິພົນທາງສັງຄົມ, ດ້ານສະພາບແວດລ້ອມສະ ໜັບສະໜູນ, ດ້ານແຮງຈູງໃຈຄວາມມັກ, ດ້ານມູນຄ່າ ລາຄາ ແລະ ດ້ານຄວາມເຄີຍຊິນ.

ຈາກບັນຫາການແຈ້ງມອບອາກອນຜ່ານ TaxRIS, ຜູ້ວິໄຈຈຶ່ງໃຫ້ປັດໄຈທີ່ສົ່ງຜົນຕໍ່ການໃຊ້ ບໍລິການແຈ້ງມອບພັນທະອາກອນຂອງຜູ້ປະກອບການ ຜ່ານລະບົບ TaxRIS ໃນເມືອງໄຊ ແຂວງອຸດົມໄຊ

ເພື່ອຈະເປັນແນວທາງ ປັບປຸງລະບົບ TaxRIS ເພື່ອ ເສີມສ້າງປັດໄຈທີ່ເຮັດໃຫ້ຜູ້ປະກອບການມາຄວາມ ສະມັກໃຈໃນການຊຳລະອາກອນ ທັງເປັນປະໂຫຍດຕໍ່ ການບໍລິການເກັບອາກອນ ແລະ ພັດທະນາເຕັກໂນໂລຊີ ຂໍ້ມູນຂ່າວສານຂອງສ່ວຍສາອາກອນ ໃນອະນາຄົດ.

ການຄົ້ນຄວ້າມີຈຸດປະສົງ ຄື: 1) ສຶກສາລະດັບ ຄວາມຄິດເຫັນຂອງຜູ້ປະກອບການ ຢູ່ເມືອງໄຊ ແຂວງ ອຸດົມໄຊ ຕໍ່ການບໍລິການແຈ້ງມອບອາກອນຜ່ານລະບົບ TaxRIS. 2) ສຶກສາປັດໄຈທີ່ສົ່ງຜົນຕໍ່ການໃຊ້ບໍລິການ ແຈ້ງມອບພັນທະອາກອນຂອງຜູ້ປະກອບການຜ່ານ ລະບົບ TaxRIS ໃນເມືອງໄຊ ແຂວງອຸດົມໄຊ.

2. ອຸປະກອນ ແລະ ວິທີການ

ໃນການຄົ້ນຄວ້າຄັ້ງນີ້ ແມ່ນນຳໃຊ້ວິທີການ ຄົ້ນຄວ້າແບບປະລິມານ ໂດຍຜູ້ຄົ້ນຄວ້າໄດ້ນຳໃຊ້ແບບ ສອບຖາມເປັນເຄື່ອງມືໃນການຄົ້ນຄວ້າ ແລະ ລວບລວມເກັບກຳຂໍ້ມູນຈາກຜູ້ປະກອບການວິສາຫະ ກິດ ໃນເມືອງໄຊ ແຂວງອຸດົມໄຊ ເຊິ່ງອຸປະກອນ ແລະ ວິທີການ ປະກອບມີ: ກຸ່ມຕົວຢ່າງ, ເຄື່ອງມືໃນການ ຄົ້ນຄວ້າ, ການເກັບລວບລວມຂໍ້ມູນ, ສົມມຸດຖານ ແລະ ວິທີວິເຄາະຂໍ້ມູນ.

2.1 ປະຊາກອນ

ປະຊາກອນທີ່ຈະໃຊ້ເຂົ້າໃນການຄົ້ນຄວ້າຄື ຜູ້ ປະກອບວິສາຫະກິດ ທີ່ຢູ່ໃນຂັ້ນຄຸ້ມຄອງສ່ວຍສາ ອາກອນ ເມືອງໄຊ ແຂວງອຸດົມໄຊ ເຊິ່ງໄດ້ຈົດທະບຽນ ແຈ້ງມອບອາກອນ ຜ່ານລະບົບ TaxRIS ຈຳນວນ 180 ຄົນ ຄົນ (Tax office of Oudomxay Province, 2024). ຈຶ່ງກຳນົດຂະໜາດປະຊາກອນທັງໝົດ.

2.2 ເຄື່ອງມືໃນການຄົ້ນຄວ້າ

1) ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ ແມ່ນ ແບບສອບຖາມເຊິ່ງປະກອບມີ 2 ພາກສ່ວນ ຄື:

ພາກສ່ວນທີ 1: ປັດໄຈສ່ວນບຸກຄົນຂອງຜູ້ ປະກອບການ ປະກອບມີ: ເພດ, ອາຍຸ, ສະຖານະພາບ, ລະດັບການສຶກສາ, ຮູບແບບກຳມະສິດ, ຂະໜາດວິ ສາຫະກິດ, ລາຍໄດ້ທຸລະກິດ, ໄລຍະເວລາດຳເນີນທຸລະ ກິດ ແລະ ຮູບແບບແຈ້ງມອບອາກອນ ໂດຍຄຳຖາມ ເປັນລັກສະນະແບບເລືອກຄຳຕອບ (Check List).

ພາກສ່ວນທີ 2: ລະດັບຄວາມຄິດເຫັນຂອງຜູ້ ປະກອບການ ຢູ່ເມືອງໄຊ ແຂວງອຸດົມໄຊ ຕໍ່ການ ບໍລິການແຈ້ງມອບອາກອນຜ່ານລະບົບ TaxRIS ປະກອບມີຄວາມສຳເລັດຂອງລະບົບຂໍ້ມູນຂ່າວສານ ແລະ ການຍອມຮັບເຕັກໂນໂລຊີ ໃນລະບົບ TaxRIS ໂດຍຄວາມສຳເລັດຂອງລະບົບຂໍ້ມູນຂ່າວສານ ປະກອບ ມີ 6 ດ້ານ ຄື: ຄຸນນະພາບລະບົບ, ຄຸນນະພາບຂໍ້ມູນ, ຄຸນນະພາບໃຫ້ບໍລິການ, ຄວາມຕັ້ງໃຈໃນການໃຊ້, ຄວາມພໍໃຈໃນການໃຊ້ງານ ແລະ ປະໂຫຍດຂອງການ ໃຊ້. ສ່ວນການຍອມຮັບເຕັກໂນໂລຊີ ໃນລະບົບ TaxRIS ປະກອບມີ 7 ດ້ານຄື: ດ້ານຄວາມຄາດຫວັງ ເຖິງປະສິດທິພາບ, ດ້ານຄາດຫ້ວງການໃຊ້ງານງ່າຍ, ດ້ານອິດທິພົນທາງສັງຄົມ, ດ້ານສະພາບແວດລ້ອມສະນັບ ສະໜູນ, ດ້ານແຮງຈູງໃຈຄວາມມັກ, ດ້ານມູນຄ່າລາຄາ ບໍລິການ ແລະ ດ້ານຄວາມເຄີຍຊິນ ໂດຍຄຳຖາມເປັນ ລັກສະນະແບບມາດຕາສ່ວນ (Rating Scale).

2) ການສ້າງເຄື່ອງມືໃນການຄົ້ນຄວ້າ: ການສ້າງ ເຄື່ອງມືໃນການຄົ້ນຄວ້າໄດ້ອີງໃສ່ແນວຄິດການຄຸ້ມຄອງ ການເກັບສ່ວຍສາອາກອນ (Smith, 1776), ແນວຄິດ ກ່ຽວກັບປັດໄຈປະຊາກອນສາດ (Schiffman & Wisenblit, 2015), ທິດສະດີແບບຈຳລອງແຫ່ງຄວາມ ສຳເລັດຂອງລະບົບຂໍ້ມູນຂ່າວສານ (Delone & McLean, 2003) ແລະ ທິດສະດີການຍອມຮັບເຕັກ ໂນໂລຊີຂໍ້ມູນຂ່າວສານ (Venkatesh et al., 2003).

3) ການຫາຄຸນນະພາບເຄື່ອງມື

- ການກວດສອບຄວາມທ່ຽງກົງ (Content Validity): ຜູ້ຄົ້ນຄວ້າໄດ້ນຳແບບສອບຖາມໃຫ້ຜູ້ ຊ່ຽວຊານ ຈຳນວນ 3 ທ່ານ ເພື່ອພິຈາລະນາຄວາມ ສອດຄ່ອງລະຫວ່າງ ຂໍ້ຄຳຖາມ ແລະ ຈຸດປະສົງຂອງ ການຄົ້ນຄວ້າ ເຊິ່ງເອີ້ນວ່າດັດຊະນີຄວາມສອດຄ່ອງ (Index of Item Objective Congruence: IOC) ທີ່ພັດທະນາໂດຍRovinelli & Hambleton (1977). ຜົນການທົດສອບ ຄ່າ IOC ພົບວ່າຂໍ້ຄຳຖາມແຕ່ລະຂໍ້ ມີຄ່າ IOC ໃຫຍ່ກວ່າ 0.67 ເຊິ່ງສູງກວ່າເກນທີ່ກຳນົດ ສະແດງວ່າແບບສອບຖາມສາມາດນຳໄປເກັບຂໍ້ມູນຈິງ ໄດ້.

- ການກວດສອບຄວາມເຊື່ອໝັ້ນ (Reliability): ຜູ້ຄົ້ນຄວ້ານຳແບບສອບຖາມໄປທົດ ສອບຄວາມເຊື່ອໝັ້ນກັບກຸ່ມເປົ້າຫມາຍຈຳນວນ 30 ສະບັບ ດ້ວຍວິທີຂອງ Cronbach's Alpha (Taber, 2017). ຜົນການທົດພົບວ່າຄ່າລະດັບຄວາມເຊື່ອໝັ້ນ ແມ່ນ 82.30% ເຊິ່ງສູງກວ່າເກນມາດຕະຖານຂອງ Cronbach's Alpha ກຳນົດໄວ້ 80% ສະແດງວ່າແບບ ສອບຖາມມີຄວາມເໝາະສົມ.

2.3 ການເກັບກາລວບລວມຂໍ້ມູນ

ຜູ້ຄົ້ນຄວ້າໄດ້ລົງເກັບກຳຂໍ້ມູນດ້ວຍຕົນເອງ ໂດຍແຈກຢາຍໃຫ້ຜູ້ປະກອບວິສາຫະກິດ ທີ່ຂຶ້ນກັບການຄຸ້ມຄອງສ່ວຍສາອາກອນເມືອງໄຊ ແຂວງອຸດົມໄຊ ເຊິ່ງໄດ້ຈົດທະບຽນແຈ້ງມອບອາກອນ ຜ່ານລະບົບ TaxRIS ຈຳນວນ 180 ຄົນ. ຫຼັງຈາກຜູ້ປະກອບການຕອບແລ້ວ ເກັບລວມຂໍ້ມູນຢ່າງເປັນລະບົບລວມທັງກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວມາປ້ອນຂໍ້ມູນເຂົ້າໂປຣແກຣມ SPSS ເພື່ອດຳເນີນການວິເຄາະ ແລະ ຕີຄວາມໝາຍຜົນໄດ້ຮັບຈາກຄົ້ນຄວ້າ.

2.4 ວິທີການວິເຄາະຂໍ້ມູນ

ສ່ວນທີ 1: ການວິເຄາະປັດໄຈສ່ວນບຸກຄົນຂອງຜູ້ປະກອບການ ເປັນການວິເຄາະແບບປະລິມານ ໂດຍຂໍ້ມູນມີລັກສະນະນາມບັນຍັດ (Nominal scale) ຈຶ່ງນຳໃຊ້ສະຖິຕິພັນລະນາ ປະກອບມີຄວາມຖີ່ ແລະ ເປີເຊັນ.

ແບບຈຳລອງ Probit

$$P(Y=1/g(X))=G(g(x))=\varphi(g(x))=\int_{-\infty}^{g(x)}\varphi(v)dv$$

$$g(X)=\beta_0+\beta_1X_1+\beta_2X_2+\beta_3X_3+\beta_4X_4+\beta_5X_5+\beta_6X_6+\beta_7X_7+\beta_8X_8+\beta_9X_9+\beta_{10}X_{10}+\beta_{11}X_{11}+\beta_{12}X_{12}+\beta_{13}X_{13}+\beta_{14}X_{14}+\beta_{15}X_{15}+X_{16}X_{16}+\beta_{17}X_{17}+\beta_{18}X_{18}+\beta_{19}X_{19}+\beta_{20}X_{20}+\beta_{21}X_{21}+\varepsilon$$

ໂດຍ: $Y=G(g(x))$, P ແມ່ນຄ່າກະຕອງເຫດການທີ່ໃຊ້ບໍລິການແຈ້ງມອບອາກອນຜ່ານລະບົບ TaxRIS, Y ແມ່ນເຫດການແຈ້ງມອບອາກອນຜ່ານລະບົບ TaxRIS ດ້ວຍຕົນເອງ (Y=1 ແຈ້ງມອບດ້ວຍຕົນເອງ ແລະ Y=0 ບໍ່ແຈ້ງມອບອາກອນຕົນເອງ). ສ່ວນ X_1, X_2, X_3, X_4, X_5, X_6, X_7, X_8, X_9, X_{10}, X_{11}, X_{12}, X_{13}, X_{14}, X_{15}, X_{16}, X_{17}, X_{18}, X_{19}, X_{20} ແລະ X_{21} ແມ່ນ ເພດ, ອາຍຸ, ສະຖານະພາບ, ລະດັບການສຶກສາ, ຮູບແບບກຳມະສິດ, ຂະໜາດທຸລະກິດ, ລາຍໄດ້ທຸລະກິດ, ໄລຍະເວລາດຳເນີນທຸລະກິດ, ດ້ານຄຸນນະພາບຂອງລະບົບ, ດ້ານຄຸນນະພາບຂອງຂໍ້ມູນຂ່າວສານ, ດ້ານຄຸນນະພາບໃຫ້ບໍລິການ, ດ້ານຄວາມຕັ້ງໃຈໃນການໃຊ້ງານ, ດ້ານຄວາມພໍໃຈໃນການໃຊ້ງານ, ດ້ານຜົນປະໂຫຍດຂອງການໃຊ້ງານ, ດ້ານຄວາມຄາດຫວັງເຖິງປະສິດທິພາບ, ດ້ານຄວາມຫວັງການໃຊ້ງານງ່າຍ, ດ້ານອິດທິພົນທາງສັງຄົມ, ດ້ານສະພາບແວດລ້ອມສະໜັບສະໜູນ, ດ້ານແຮງຈູງໃຈຄວາມມັກ, ດ້ານມູນຄ່າລາຄາບໍລິການ ແລະ ດ້ານຄວາມເຄີຍຊິນ ຕາມລຳດັບ.

ສ່ວນທີ 2: ການວິເຄາະລະດັບຄວາມຄິດເຫັນຂອງຜູ້ປະກອບການ ຢູ່ເມືອງໄຊ ແຂວງອຸດົມໄຊ ຕໍ່ການບໍລິການແຈ້ງມອບອາກອນຜ່ານລະບົບ TaxRIS ເປັນການວິເຄາະແບບປະລິມານ ໂດຍຂໍ້ມູນເປັນລັກສະນະແບບມາດຕາສ່ວນ (Rating Scale) ຈຶ່ງນຳໃຊ້ສະຖິຕິພັນລະນາ ປະກອບດ້ວຍຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ.

ສ່ວນທີ 3: ການວິເຄາະປັດໄຈທີ່ສົ່ງຜົນຕໍ່ການໃຊ້ບໍລິການແຈ້ງມອບອາກອນຂອງຜູ້ປະກອບການຜ່ານລະບົບ TaxRIS ໃນເມືອງໄຊ ແຂວງອຸດົມໄຊ ເປັນການວິເຄາະແບບປະລິມານ ໃນການປະເມີນສົມຜົນການຖົດຖອຍສອງທາງເລືອກ (Binary Regression) ແລະ ອະທິບາຍຜົນການປະເມີນຄ່າດ້ວຍ Marginal effects (Slope) ໂດຍມີແບບຈຳລອງ ດັ່ງນີ້:

3. ຜົນໄດ້ຮັບ

3.1 ລະດັບຄວາມຄິດເຫັນຂອງຜູ້ປະກອບການ ຢູ່ເມືອງໄຊ ແຂວງອຸດົມໄຊ ຕໍ່ການບໍລິການແຈ້ງມອບອາກອນຜ່ານລະບົບ TaxRIS.

ຜູ້ປະກອບການ ຢູ່ເມືອງໄຊ ແຂວງອຸດົມໄຊ ຈຳນວນ 180 ຄົນ ສ່ວນໃຫຍ່ເພດຊາຍ ຈຳນວນ 105 ຄົນ ກວມເອົາ 58.33% ໂດຍມີອາຍຸສະເລ່ຍ 43.45 ປີ, ສະຖານະພາບແຕ່ງງານ ຈຳນວນ 149 ຄົນ ກວມເອົາ 82.78%, ລະດັບການສຶກສາປະລິນຍາຕີ ຈຳນວນ 96 ຄົນ ກວມເອົາ 58.33%, ຮູບແບບກຳມະສິດແມ່ນວິສາຫະກິດສ່ວນບຸກຄົນ ຈຳນວນ 143 ຄົນ ກວມເອົາ 79.44%, ເປັນຂະໜາດນ້ອຍ ຈຳນວນ 128 ຄົນ ກວມ 71.71%, ລາຍໄດ້ທຸລະກິດ ສະເລ່ຍ 95.6 ລ້ານກີບຕໍ່ເດືອນ, ໄລຍະເວລາດຳເນີນທຸລະກິດສະເລ່ຍ 7.96 ປີ, ການໃຊ້ບໍລິການແຈ້ງມອບອາກອນ ສ່ວນໃຫຍ່ແມ່ນແຈ້ງມອບອາກອນຜ່ານລະບົບ TaxRIS ດ້ວຍຕົນເອງ ຈຳນວນ 130 ຄົນ ກວມເອົາ 72.22%, ສ່ວນທີ່ເຫຼືອແຈ້ງມອບຜ່ານປ່ອງບໍລິການສຳນັກງານສ່ວຍສາອາກອນ 50 ຄົນ ກວມເອົາ 27.78%.

ລະດັບຄວາມຄິດເຫັນຂອງຜູ້ປະກອບການ ຢູ່ເມືອງໄຊ ແຂວງອຸດົມໄຊ ຕໍ່ການບໍລິການແຈ້ງມອບອາກອນ

ຜ່ານລະບົບ TaxRIS ຈຳນວນ 180 ຄົນ ມີຄວາມຄິດເຫັນເຫັນດີຕໍ່ດ້ານຄວາມສຳເລັດຂອງລະບົບຂໍ້ມູນຂ່າວສານ ໃນລະບົບ TaxRIS ໂດຍລວມຢູ່ໃນລະດັບຫຼາຍ (μ=3.97, σ=0.36) ເຊິ່ງຈັດອັນດັບລະດັບຄ່າສະເລ່ຍແຕ່ໃຫຍ່ຫານ້ອຍ ມາຈາກ: 1) ດ້ານຄວາມຕັ້ງໃຈໃນການໃຊ້ງານເລື່ອງສິດທິ ແລະ ໜ້າທີ່ໃນການແຈ້ງມອບອາກອນ ແລະ ຊຳລະອາກອນ ໃນໄລຍະເວລາທີ່ກຳນົດ, 2) ດ້ານປະໂຫຍດຂອງການໃຊ້ງານໃນເລື່ອງບໍ່ມີຄ່າໃຊ້ຈ່າຍໃນການໃຊ້ບໍລິການ, 3) ດ້ານຄຸນນະພາບລະບົບ ໃນເລື່ອງສາມາດແກ້ໄຂຄວາມຜິດພາດຂອງລະບົບໄດ້ຢ່າງວ່ອງໄວ ແລະ ທັນເວລາ, 4) ດ້ານຄວາມພໍໃຈໃນການໃຊ້ງານໃນເລື່ອງລະບົບຄວາມປອດໄພໃນການແຈ້ງມອບອາກອນຜ່ານລະບົບ TaxRIS, 5) ດ້ານຄຸນນະພາບຂໍ້ມູນຂ່າວສານໃນເລື່ອງການເຊື່ອມໂຍງລະບົບການກັບລະບົບການແຈ້ງມອບມີຄວາມຖືກຕ້ອງ, ຄົບຖ້ວນ, ສົມບູນ ແລະ ເຊື່ອຖືໄດ້ ແລະ 6) ດ້ານຄຸນນະພາບໃຫ້ບໍລິການໃນເລື່ອງຊ່ອງທາງຕິດຕໍ່ເຈົ້າໜ້າທີ່ສ່ວນສາອາກອນຫຼາກຫຼາຍຊ່ອງທາງ ເມື່ອກໍລະນີເກີດບັນຫາໃນການແຈ້ງມອບ (ຕາຕະລາງທີ 2). ສ່ວນຄວາມຄິດເຫັນເຫັນດີຕໍ່ການຍອມຮັບເຕັກໂນໂລຊີ ໃນລະບົບ TaxRIS ໂດຍລວມຢູ່ໃນລະດັບຫຼາຍ (μ=4.06; σ=0.44) ເຊິ່ງຈັດອັນດັບລະດັບຄ່າສະເລ່ຍແຕ່ໃຫຍ່ຫານ້ອຍ ມາຈາກ: 1) ດ້ານຄວາມຄາດຫວັງເຖິງປະສິດທິພາບໃນເລື່ອງຄວາມສາມາດດຳເນີນໄດ້ຢ່າງສະດວກ ແລະ ວ່ອງໄວ, 2) ດ້ານມູນຄ່າລາຄາບໍລິການ ໃນເລື່ອງການແຈ້ງມອບອາກອນຜ່ານລະບົບ TaxRIS ທາງເວັບໄຊ ຍົກເວັ້ນຄ່າທຳນຽມໃນການແຈ້ງມອບອາກອນ, 3) ດ້ານສະພາບແວດລ້ອມສະໜັບສະໜຸນໃນພະນັກງານສ່ວຍສາອາກອນແຂວງມີການໃຫ້ຄຳແນະນຳການແຈ້ງມອບອາກອນຜ່ານລະບົບ TaxRIS, 4) ດ້ານແຮງຈູງໃຈຄວາມມັກ ໃນເລື່ອງເວັບໄຊໃນການແຈ້ງມອບອາກອນ ຜ່ານລະບົບ TaxRIS ມີຮູບແບບດ້ານຈັດລ້ຽງເນື້ອໃນເໝາະສົມ ແລະ ອ່ານເຂົ້າໃຈງ່າຍ, 5)ດ້ານຄາດຫ້ອງການໃຊ້ງານງ່າຍ ໃນເລື່ອງການບໍ່ມີຄວາມຊັບຊ້ອນສາມາດພັດທະນາທັກສະ ແລະ ຮຽນຮູ້ການແຈ້ງມອບອາກອນດ້ວຍຕົນເອງ, 6) ດ້ານອິດທິພົນທາງສັງຄົມໃນເລື່ອງຊ່ວຍເພີ່ມພາບຫຼັກທຸລະກິດ ລວມທັງເປັນຄົນຍຸກໃໝ່ຕາມຍຸກເຕັກໂນໂລຊີ ແລະ 7) ດ້ານຄວາມເຄີຍຊິນໃນເລື່ອງການມີປະສົບການໃນການນຳໃຊ້ເວັບໄຊໃນການຊຳລະເງິນຜ່ານທະນາຄານທາງອິນເຕີເນັດ ເຮັດໃຫ້ຍາກແຈ້ງມອບອາກອນຜ່ານ TaxRIS (ຕາຕະລາງທີ 3).

3.2 ປັດໄຈທີ່ສົ່ງຜົນຕໍ່ການໃຊ້ບໍລິການແຈ້ງມອບພັນທະອາກອນຂອງຜູ້ປະກອບການຜ່ານລະບົບ TaxRIS ໃນເມືອງໄຊ ແຂວງອຸດົມໄຊ

ປັດໄຈທີ່ສົ່ງຜົນຕໍ່ການໃຊ້ບໍລິການແຈ້ງມອບພັນທະອາກອນຂອງຜູ້ປະກອບການຜ່ານລະບົບ TaxRIS ໃນເມືອງໄຊ ແຂວງອຸດົມໄຊ ປະກອບມີ 10 ປັດໄຈ ເຊິ່ງສົມຜົນສາມາດພະຍາກອນ ໄດ້ເຖິງ 59.97% (R^2= 0.5997) (ຕາຕະລາງທີ 4) ເຊິ່ງສາມາດອະທິບາຍໄດ້ດັ່ງນີ້:

1) ປັດໄຈດ້ານສະຖານະພາບ: ໝາຍຄວາມວ່າຖ້າຜູ້ປະກອບການ ມີສະຖານະພາບແຕ່ງງານແລ້ວ ຈະມີໂອກາດໃຊ້ບໍລິການແຈ້ງມອບອາກອນຜ່ານລະບົບ TaxRIS ດ້ວຍຕົນເອງ ເພີ່ມຂຶ້ນ 27.67% ແລະ ກົງກັບສົມມຸດຖານຕັ້ງໄວ້.

2) ປັດໄຈດ້ານຂະໜາດທຸລະກິດ: ໝາຍຄວາມວ່າຖ້າຂະໜາດທຸລະກິດ ເປັນຂະໜາດນ້ອຍ ຈະມີໂອກາດ ໃຊ້ບໍລິການແຈ້ງມອບອາກອນຜ່ານລະບົບ TaxRIS ດ້ວຍຕົນເອງ ເພີ່ມຂຶ້ນ 13.69% ແລະ ກົງກັບສົມມຸດຖານຕັ້ງໄວ້.

3) ປັດໄຈດ້ານລາຍຮັບທຸລະກິດ: ໝາຍຄວາມວ່າຖ້າລາຍຮັບທຸລະກິດ ເພີ່ມຂຶ້ນ 1 ລ້ານກີບ ຈະມີໂອກາດ ໃຊ້ບໍລິການແຈ້ງມອບອາກອນຜ່ານລະບົບ TaxRIS ດ້ວຍຕົນເອງ ຫຼຸດລົງ 3.07% ແລະ ກົງກັນຂ້າມສົມມຸດຖານຕັ້ງໄວ້.

4) ປັດໄຈຄຸນນະພາບຂອງລະບົບ: ໝາຍຄວາມວ່າຖ້າຄຸນນະພາບຂອງລະບົບ TaxRIS ໄດ້ສ້າງຜູ້ປະກອບການມີຄວາມເຫັນດີເພີ່ມຂຶ້ນ 1 ລະດັບ ຈະມີໂອກາດໃຊ້ບໍລິການແຈ້ງມອບອາກອນຜ່ານລະບົບ TaxRIS ດ້ວຍຕົນເອງ ເພີ່ມຂຶ້ນ 18.09% ແລະ ກົງກັບສົມມຸດຖານຕັ້ງໄວ້.

5) ປັດໄຈຄວາມພໍໃຈໃນການໃຊ້ງານ: ໝາຍຄວາມວ່າຖ້າຄວາມພໍໃຈໃນການໃຊ້ງານ ໃນລະບົບ TaxRIS ໄດ້ສ້າງຜູ້ປະກອບການມີຄວາມເຫັນດີ ເພີ່ມຂຶ້ນ 1 ລະດັບ ຈະມີໂອກາດໃຊ້ບໍລິການແຈ້ງມອບອາກອນຜ່ານລະບົບ TaxRIS ດ້ວຍຕົນເອງ ຫຼຸດລົງ 27.60 % ແລະ ກົງກັນຂ້າມສົມມຸດຖານຕັ້ງໄວ້.

6) ປັດໄຈຄວາມຄາດຫວັງໃນການໃຊ້ງານງ່າຍ: ໝາຍຄວາມວ່າຖ້າຄວາມຄາດຫວັງໃນການໃຊ້ງານງ່າຍໃນລະບົບ TaxRIS ໄດ້ສ້າງຜູ້ປະກອບການມີຄວາມເຫັນດີ ເພີ່ມຂຶ້ນ 1 ລະດັບ ຈະມີໂອກາດໃຊ້ບໍລິການແຈ້ງມອບອາກອນຜ່ານລະບົບ TaxRIS ດ້ວຍຕົນເອງ ເພີ່ມຂຶ້ນ 21.29% ແລະ ກົງກັບສົມມຸດຖານຕັ້ງໄວ້.

7) ປັດໄຈອິດທິພົນທາງສັງຄົມ: ໝາຍຄວາມວ່າຖ້າອິດທິພົນທາງສັງຄົມໃນລະບົບ TaxRIS ໄດ້ສ້າງຜູ້ປະກອບການມີຄວາມເຫັນດີ ເພີ່ມຂຶ້ນ 1 ລະດັບ ຈະມີໂອກາດໃຊ້

ບໍລິການແຈ້ງມອບອາກອນຜ່ານລະບົບ TaxRIS ດ້ວຍຕົນເອງ ເພີ່ມຂຶ້ນ 34.04% ແລະ ກົງກັບສົມມຸດຖານຕັ້ງໄວ້.

8) ປັດໄຈສະພາບແວດລ້ອມໃນການສະໜັບສະໜູນ: ໝາຍຄວາມວ່າຖ້າສະພາບແວດລ້ອມໃນການສະໜັບສະໜູນໃນລະບົບ TaxRIS ໄດ້ສ້າງຜູ້ປະກອບການມີຄວາມເຫັນດີ ເພີ່ມຂຶ້ນ 1 ລະດັບ ຈະມີໂອກາດໃຊ້ບໍລິການແຈ້ງມອບອາກອນຜ່ານລະບົບ TaxRIS ດ້ວຍຕົນເອງ ຫຼຸດລົງ 51.60% ແລະ ກົງກັບສົມມຸດຖານຕັ້ງໄວ້.

9) ປັດໄຈແຮງຈູງໃຈໃນການມັກ: ໝາຍຄວາມວ່າຖ້າແຮງຈູງໃຈໃນການມັກໃນລະບົບ TaxRIS ໄດ້ສ້າງຜູ້ປະກອບການມີຄວາມເຫັນດີ ເພີ່ມຂຶ້ນ 1 ລະດັບ ຈະມີໂອກາດໃຊ້ບໍລິການແຈ້ງມອບອາກອນຜ່ານລະບົບ TaxRIS ດ້ວຍຕົນເອງ ເພີ່ມຂຶ້ນ17.42% ແລະ ກົງກັບສົມມຸດຖານຕັ້ງໄວ້.

10) ປັດໄຈມູນຄ່າການບໍລິການ: ໝາຍຄວາມວ່າຖ້າມູນຄ່າການບໍລິການໃນລະບົບ TaxRIS ໄດ້ສ້າງຜູ້ປະກອບການມີຄວາມເຫັນດີ ເພີ່ມຂຶ້ນ 1 ລະດັບ ຈະມີໂອກາດໃຊ້ບໍລິການແຈ້ງມອບອາກອນຜ່ານລະບົບ TaxRIS ດ້ວຍຕົນເອງ ເພີ່ມຂຶ້ນ 25.98% ແລະ ກົງກັບສົມມຸດຖານຕັ້ງໄວ້.

4. ວິພາກ

1) ຈາກການຄົ້ນຄວ້າພົບວ່າລະດັບຄວາມຄິດເຫັນຂອງຜູ້ປະກອບການ ຢູ່ເມືອງໄຊ ແຂວງອຸດົມໄຊ ຕໍ່ການບໍລິການແຈ້ງມອບອາກອນຜ່ານລະບົບ TaxRIS ໂດຍລວມມີຄວາມຄິດເຫັນເຫັນດີຕໍ່ຜົນສຳເລັດຂອງລະບົບ TaxRIS ຢູ່ໃນລະດັບຫຼາຍ ເຊິ່ງມາຈາກ ດ້ານຄວາມຕັ້ງໃຈໃນການໃຊ້ງານ, ດ້ານປະໂຫຍດຂອງການໃຊ້ງານ, ດ້ານຄຸນນະພາບລະບົບ, ດ້ານຄວາມພໍໃຈໃນການໃຊ້ງານ, ດ້ານຄຸນນະພາບຂໍ້ມູນຂ່າວສານ ແລະ ດ້ານຄຸນນະພາບໃຫ້ບໍລິການ. ສ່ວນຄວາມຄິດເຫັນເຫັນດີຕໍ່ການຍອມຮັບເຕັກໂນໂລຊີ ໃນລະບົບ TaxRIS ໂດຍລວມຢູ່ໃນລະດັບຫຼາຍ ເຊິ່ງມາຈາກ ດ້ານຄວາມຄາດຫວັງເຖິງປະສິດທິພາບ, ດ້ານມູນຄ່າລາຄາບໍລິການ, ດ້ານສະພາບແວດລ້ອມສະໜັບສະໜູນ, ດ້ານແຮງຈູງໃຈຄວາມມັກ, ດ້ານຄາດຫວັງການໃຊ້ງານງ່າຍ, ດ້ານອິດທິພົນທາງສັງຄົມ ແລະ ດ້ານຄວາມເຄີຍຊິນ. ການຄົ້ນຄວ້າສອດຄ່ອງກັບ Thammachalern et al. (2025) ທີ່ໄດ້ຄົ້ນຄວ້າຄວາມຄິດເຫັນຂອງຜູ້ປະກອບການຕໍ່ການບໍລິການແຈ້ງມອບອາກອນຜ່ານລະບົບ TaxRIS ໃນເມືອງໄຊຍະບູລີ ແຂວງໄຊຍະບູລີ ທີ່ມີຄວາມຄິດເຫັນຕໍ່ຜົນສຳເລັດຂອງລະບົບ TaxRIS ຢູ່ໃນລະດັບຫຼາຍ ໃນ 6 ດ້ານ ຄື: ດ້ານປະໂຫຍດຂອງການໃຊ້ງານ, ດ້ານຄຸນນະພາບການບໍລິການ, ດ້ານການຕັ້ງໃຈໃນການໃຊ້ງານ, ດ້ານຄຸນນະພາບຂໍ້ມູນຂ່າວສານ, ດ້ານຄຸນນະພາບລະບົບ ແລະ ດ້ານຄວາມພໍໃຈຂອງຜູ້ໃຊ້ງານ. ການຄົ້ນຄວ້າຍັງສອດຄ່ອງກັບ. ການຄົ້ນຄວ້າສອດຄ່ອງກັບ Khainoo (2021) ທີ່ໄດ້ຄົ້ນຄວ້າປະສິດທິພາບຂອງການແຈ້ງມອບ ອາກອນລາຍໄດ້ບຸກຄົນທຳມະດາຜ່ານອອນໄລ ໃນເຂດກຸງເທບມະຫານະຄອນ (ໄທ) ເຊິ່ງລະດັບຄວາມຄິດເຫັນເຫັນດີຕໍ່ຜົນສຳເລັດຂອງລະບົບ TaxRIS ຢູ່ໃນລະດັບຫຼາຍ ໃນ 4 ດ້ານ ຄື ການຮັບຮູ້ເຖິງຜົນປະໂຫຍດຂອງລະບົບ, ຄຸນນະພາບໃນການໃຫ້ບໍລິການ, ດ້ານຄຸນນະພາບຂອງລະບົບ ແລະ ດ້ານຄຸນນະພາບຂອງຂໍ້ມູນ. ການຄົ້ນສອດຄ່ອງກັບ Nontakhun (2018) ປັດໄຈທີ່ສົ່ງຜົນຕໍ່ການເລືອກໃຊ້ບໍລິການຍື່ນແບບຟອມອາກອນລາຍໄດ້ບຸກຄົນທຳມະດາຜ່ານທາງອອນລາຍ ໃນເຂດກຸງເທບມະຫານະຄອນ ເຊິ່ງລະດັບຄວາມຄິດເຫັນເຫັນດີຕໍ່ການຍອມຮັບເຕັກໂນໂລຊີໃນລະບົບ TaxRIS ໂດຍລວມຢູ່ໃນລະດັບຫຼາຍ ໃນ 7 ດ້ານ ຄື: ຄວາມຄາດຫວັງເຖິງປະສິດທິພາບ, ດ້ານຄ່າໃຊ້ຈ່າຍໃນການໃຊ້ບໍລິການ, ດ້ານຄວາມຊິນເຄີຍ, ຄວາມຄາດຫວັງການໃຊ້ວຽກງານງ່າຍ, ດ້ານສະພາບແວດລ້ອມສະໜັບສະໜູນ, ດ້ານຄວາມພໍໃຈ ແລະ ດ້ານອິດທິພົນທາງສັງຄົມ Kongkeaw (2023) ທີ່ໄດ້ຄົ້ນຄວ້າປັດໄຈທີ່ສົ່ງຜົນຕໍ່ການຍອມຮັບໃຊ້ລະບົບ Revenue Department E-Filing ທີ່ມີຄວາມຄິດເຫັນເຫັນດີຫຼາຍ ໃນ 2 ດ້ານຄື: ການຮັບຮູ້ເຖິງຄວາມຍາກງ່າຍ ແລະ ການຮັບຮູ້ເຖິງຜົນປະໂຫຍດ. ສະນັ້ນ, ເພື່ອໃຫ້ລະບົບການແຈ້ງມອບອາກອນຜ່ານ ລະບົບ TaxRIS ປະສົບຜົນສຳເລັດຢ່າງມີປະສິດທິພາບ ແລະ ການຍອມຮັບເຕັກໂນໂລຊີ ໃນລະບົບ TaxRIS ຂອງຜູ້ປະກອບການ ຕ້ອງປັບປຸງ ແລະ ພັດທະນາລະບົບການແຈ້ງມອບອາກອນຜ່ານລະບົບ TaxRIS ໃຫ້ມີປະສິດທິພາບດີຂຶ້ນ ແລະ ສອດຄ່ອງກັບການປ່ຽນແປງທາງດ້ານເຕັກໂນໂລຊີໃນປະຈຸບັນ ເພື່ອໃຫ້ຜູ້ປະກອບການມາແຈ້ງມອບອາກອນຜ່ານລະບົບ TaxRIS ດ້ວຍຕົນເອງຫຼາຍຂຶ້ນໃນອະນາຄົດ ຕ້ອງສ້າງລະບົບການແຈ້ງມອບອາກອນໃຫ້ມີຄວາມພໍໃຈໃນລະບົບຄວາມປອດໄພ, ຄວາມງ່າຍດາຍໃນການເຂົ້າເຖິງ ແລະ ຄວາມໂປ່ງໃສ; ປັບປຸງ ແລະ ພັດທະນາຄຸນນະພາບຂອງລະບົບ ໂດຍການອອກແບບທັນສະໄໝ ແລະ ເໝາະສົມກັບການໃຊ້ວຽກງານໃນປະຈຸບັນ; ປັບປຸງ ແລະ ພັດທະນາດ້ານຄຸນນະພາບຂໍ້ມູນຂ່າວສານທີ່ສາມາດເຊື່ອມໂຍງກັບລະບົບການແຈ້ງມອບຢ່າງມີຄວາມຖືກຕ້ອງ, ຄົບຖ້ວນ, ສົມບູນ ແລະ ເຊື່ອຖືໄດ້; ປັບປຸງ ແລະ ພັດທະນາ

ດ້ານຄຸນນະພາບການບໍລິການ ທີ່ສາມາດບໍລິການຕະຫຼອດ 24 ຊົ່ວໂມງ, ມີຊ່ອງທາງຕິດຕໍ່ເຈົ້າໜ້າທີ່ສ່ວຍສາອາກອນຫຼາກຫຼາຍຊ່ອງທາງ ເມື່ອກໍລະນີເກີດບັນຫາໃນການແຈ້ງມອບ.

3) ປັດໄຈທີ່ສົ່ງຜົນຕໍ່ການໃຊ້ບໍລິການແຈ້ງມອບອາກອນຂອງຜູ້ປະກອບການຜ່ານລະບົບ TaxRIS ໃນເມືອງໄຊ ແຂວງອຸດົມໄຊ ປະກອບມີ 10 ປັດໄຈ ຄື: ດ້ານສະຖານະພາບ, ດ້ານຂະໜາດທຸລະກິດ, ດ້ານລາຍຮັບທຸລະກິດ, ດ້ານຄຸນນະພາບຂອງລະບົບ, ດ້ານຄວາມພໍໃຈໃນການໃຊ້ງານ, ດ້ານຄວາມຄາດຫວັງໃນການໃຊ້ງານງ່າຍ, ດ້ານອິດທິພົນທາງສັງຄົມ, ດ້ານສະພາບແວດລ້ອມໃນການສະໜັບສະໜູນ, ດ້ານແຮງຈູງໃຈໃນການມັກ. ການຄົ້ນຄວ້າສອດຄ່ອງກັບ Nontakhun (2018) ປັດໄຈທີ່ສົ່ງຜົນຕໍ່ການເລືອກໃຊ້ບໍລິການຍື່ນແບບຟອມອາກອນລາຍໄດ້ບຸກຄົນທຳມະດາຜ່ານທາງອອນລາຍ ໃນເຂດກຸງເທບມະຫານະຄອນ ໃນ 3 ດ້ານ ຄື: ດ້ານລາຍຮັບທຸລະກິດ, ການຄາດຫວັງເຖິງປະສິດທິພາບ, ດ້ານສະພາບແວດລ້ອມໃນການສະໜັບສະໜູນ. ການຄົ້ນຄວ້າແຕກຕ່າງຈາກ Nuttaro (2020) ໄດ້ສຶກສາປັດໄຈສົ່ງຜົນຕໍ່ການໃຊ້ບໍລິການແຈ້ງມອບອາກອນລາຍໄດ້ບຸກຄົນທຳມະດາຜ່ານອິນເຕີເນັດ ໃນເຂດສຳນັກງານລາຍຮັບສາຂາທ່າມະກາ ແຂວງການຈະນະບຸລີ ປະກອບມີ 2 ປັດໄຈ ຄື: ຄຸນນະພາບຂອງຂໍ້ມູນ ແລະ ຄຸນນະພາບຂອງການໃຫ້ບໍລິການ. ການຄົ້ນຄວ້າຍັງແຕກຕ່າງຈາກ Singthalanon et al. (2023) ທີ່ໄດ້ສຶກສາປັດໄຈທີ່ສົ່ງຜົນຕໍ່ການຊຳລະອາກອນຜ່ານລະບົບທະນາຄານຂອງຜູ້ປະກອບການ ທີ່ດຳເນີນທຸລະກິດ ຢູ່ພາຍໃນເມືອງໄຊ ແຂວງອຸດົມໄຊ ປະກອບມີ 5 ປັດໄຈຄື ປັດໄຈດ້ານຄວາມເຊື່ອໝັ້ນ, ພື້ນຖານໂຄງລ່າງທາງດ້ານເຕັກໂນໂລຊີ, ປັດໄຈດ້ານກົດໝາຍ, ປັດໄຈດ້ານທັດສະນະຄະຕິ ແລະ ປັດໄຈການຮັບຮູ້ເຖິງຄວາມສ່ຽງ. ສະນັ້ນ, ຈຶ່ງສະເໜີໃຫ້ລັດຖະບານ ໂດຍສະເພາະກົມສ່ວຍສາອາກອນ ລວມທັງສ່ວຍສາອາກອນແຂວງອຸດົມໄຊ ຕ້ອງການໃຫ້ຜູ້ປະກອບການມາແຈ້ງມອບອາກອນຜ່ານລະບົບ TaxRIS ດ້ວຍຕົນເອງ ຕ້ອງໃຫ້ຄວາມສຳຄັນ ແລະ ພິຈາລະນາປັດໄຈສ່ວນບຸກຄົນ, ດ້ານຄວາມສຳເລັດຂອງລະບົບ TaxRIS ແລະ ປັດໄຈການຍອມຮັບເຕັກໂນໂລຊີ ໃນລະບົບ TaxRIS ໂດຍສະເພາະດ້ານສະຖານະພາບ, ດ້ານຂະໜາດທຸລະກິດ, ດ້ານລາຍຮັບທຸລະກິດ, ດ້ານຄຸນນະພາບຂອງລະບົບ, ດ້ານຄວາມພໍໃຈໃນການໃຊ້ງານ, ດ້ານຄວາມຄາດຫວັງໃນການໃຊ້ງານງ່າຍ, ດ້ານອິດທິພົນທາງສັງຄົມ, ດ້ານສະພາບແວດລ້ອມໃນການສະໜັບສະໜູນ, ດ້ານແຮງຈູງໃຈໃນການມັກ.

5. ສະຫຼຸບ

ລະດັບຄວາມຄິດເຫັນຂອງຜູ້ປະກອບການ ຢູ່ເມືອງໄຊ ແຂວງອຸດົມໄຊ ຕໍ່ການບໍລິການແຈ້ງມອບອາກອນຜ່ານລະບົບ TaxRIS ໂດຍລວມມີຄວາມຄິດເຫັນເຫັນດີຕໍ່ຜົນສຳເລັດຂອງລະບົບ TaxRIS ຢູ່ໃນລະດັບຫຼາຍ ເຊິ່ງມາຈາກດ້ານຄວາມຕັ້ງໃຈໃນການໃຊ້ງານ, ດ້ານປະໂຫຍດຂອງການໃຊ້ງານ, ດ້ານຄຸນນະພາບລະບົບ, ດ້ານຄວາມພໍໃຈໃນການໃຊ້ງານ, ດ້ານຄຸນນະພາບຂໍ້ມູນຂ່າວສານ ແລະ ດ້ານຄຸນນະພາບໃຫ້ບໍລິການ. ສ່ວນຄວາມຄິດເຫັນເຫັນດີຕໍ່ການຍອມຮັບເຕັກໂນໂລຊີ ໃນລະບົບ TaxRIS ໂດຍລວມຢູ່ໃນລະດັບຫຼາຍ ເຊິ່ງຈາກດ້ານຄວາມຄາດຫວັງເຖິງປະສິດທິພາບ, ດ້ານມູນຄ່າລາຄາບໍລິການ, ດ້ານສະພາບແວດລ້ອມສະໜັບສະໜູນ, ດ້ານແຮງຈູງໃຈຄວາມມັກ, ດ້ານຄາດຫວັງການໃຊ້ງານງ່າຍ, ດ້ານອິດທິພົນທາງສັງຄົມ ແລະ ດ້ານຄວາມເຄີຍຊິນ.

ປັດໄຈທີ່ສົ່ງຜົນຕໍ່ການໃຊ້ບໍລິການແຈ້ງມອບອາກອນຂອງຜູ້ປະກອບການຜ່ານລະບົບ TaxRIS ໃນເມືອງໄຊ ແຂວງອຸດົມໄຊ ປະກອບມີ 10 ປັດໄຈ ຄື: ດ້ານສະຖານະພາບ, ດ້ານຂະໜາດທຸລະກິດ, ດ້ານລາຍຮັບທຸລະກິດ, ດ້ານຄຸນນະພາບຂອງລະບົບ, ດ້ານຄວາມພໍໃຈໃນການໃຊ້ງານ, ດ້ານຄວາມຄາດຫວັງໃນການໃຊ້ງານງ່າຍ, ດ້ານອິດທິພົນທາງສັງຄົມ, ດ້ານສະພາບແວດລ້ອມໃນການສະໜັບສະໜູນ, ດ້ານແຮງຈູງໃຈໃນການມັກ. ການຄົ້ນຄວ້າຄັ້ງນີ້ແມ່ນສຶກສາດ້ານຄວາມຄິດເຫັນຂອງຜູ້ປະກອບການທີ່ແຈ້ງມອບພັນທະອາກອນຜ່ານ TaxRIS ຍັງບໍ່ໄດ້ສຶກສາຄວາມຄິດເຫັນຂອງເຈົ້າໜ້າທີ່ສ່ວຍສາອາກອນກ່ຽວກັບປັດໄຈທີ່ສົ່ງຜົນໃຫ້ຜູ້ປະກອບການມາໃຊ້ບໍລິການການທີ່ແຈ້ງມອບພັນທະອາກອນຜ່ານ TaxRIS ເຊິ່ງເຮັດໃຫ້ສົມຜົນສາມາດພະຍາກອນປັດໄຈທີ່ສົ່ງຜົນຕໍ່ການໃຊ້ບໍລິການແຈ້ງມອບອາກອນຂອງຜູ້ປະກອບການຜ່ານລະບົບ TaxRIS ໃນເມືອງໄຊ ແຂວງອຸດົມໄຊ ໄດ້ພຽງ 59.97%. ສະນັ້ນ, ໃນການສຶກສາຄັ້ງຕໍ່ໄປເພື່ອເປັນແນວທາງໃນການແກ້ໄຂບັນຫາການທີ່ແຈ້ງມອບພັນທະອາກອນຜ່ານ TaxRIS ຄວນນຳເກັບກຳຂໍ້ມູນຈາກຜູ້ປະກອບການ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ ເຂົ້າມາເປັນປະຊາກອນໃນການສຶກສາ ເຊິ່ງຈະເຮັດຜົນການສຶກສາພະຍາກອນໄດ້ຫຼາຍຂຶ້ນ.

6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດຂໍປະຕິຍານຕົນວ່າຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງຂ້າພະເຈົ້າມີຄວາມຍິນດີທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

7. ເອກະສານອ້າງອີງ

Delone, W. H., & McLean, E. R. (2003). The DeLone and McLean model of information systems success: A ten-year update. *Information System, 19*(4), 9–30.

Deparment of Taxation. (2020). *Agreement on the creation of documents using the TaxRIS system.* Vientiane captital: Deparment of Taxation publishing.

Khainoo, T. (2021). The efficiency of filing personal income tax return online in Bangkok area *[Master of thesis, Chulalongkorn University]*. Retrieved from https://digital.car.chula.ac.th/cgi/viewcontent.cgi?article=9021&context=chulaetd

Kongkeaw, A. (2023). Factor affecting the acceptance of revenue deparment E-filing system [Master of thesis, Songkla University, Thailand]. Retrieved from https://kb.psu.ac.th/psukb/bitstream/2016/17867/1/6410521069.pdf

Ministry of Finance. (2018). *Recommendations on the Management and Use of Modern Tax Payment Systems.* Vientiane Capital: Ministry of Finance publishing.

Ministry of Finance. (2019, june 17). *The law on tax administration*. Retrieved from https://www.mof.gov.la/

Nontakhun, A. (2018). Factor affecting the decision to file online personal income tax returns in Bangkok Thailand *[Master of thesis, Thammast university]*. Retrieved from https://ethesisarchive.library.tu.ac.th/thesis/2018/TU_2018_6004010556_9970_10374.pdf

Nuttaro, W. (2020). Factors Affecting of E-Filing Services of Personal Income Tax of Tha Maka Area Revenue Branch Office, Kanchanaburi Province [*Master of thesis, Ramkhamhaeng University]*. Retrieved from https://mmm.ru.ac.th/MMM/IS/ml10/6114962092.pdf

Rovinelli, R. J., & Hambleton, R. K. (1977). On the use of content specialists in the assessment of criterion-referenced test item validity. *Tijdschrift Voor Onderwijs Research, 2*(2), 49–60.

Schiffman, L., & Wisenblit, J. (2015). *Comsumer Behavior.* Boston: Pearson Education Limited press.

Singthalanon, V., Chanthavone, T., & Phounnaly, P. (2023). Factors affecting tax payment through commercial bank systemof enterpreneurs in Xay district, Oudomxay province. *Souphanouvong University Journal of Multidisciplinary Research and Development, 9*(2), 169-179.

Smith, A. (1776). *The Wealth of Nations.* Oxford, England: Bibliomania.com Ltd press.

Taber, K. (2017). The Use of Cronbach's Alpha when Developing and Reporting Research Instruments in Science Education. *ResearchinScienceEducation, 48*(6), 1273-1296.

Tax office of Oudomxay Province. (2024). *Oudomxay Provincial Tax Revenue Performance Report.* Oudomxay Province: Tax office of Oudomxay Province publishing.

Thammachalern, S., Phounnaly, p., & Chathavone, T. (2025). Entrepreneurs' Opinion Toward Tax Filing Service via the TaxRIS System in Xayabuli District, Xayabuli Province. *Souphanouvong University Journal Multidisciplinary Research and Development, 11*(3), 164–171. Retrieved from https://doi.org/10.69692/SUJMRD1103164

Venkatesh, V., Morris, M., Davis, G., & Davis, F. (2003). User Acceptance of Information Technology: Toward a Unified View. *MIS Quarterly, 27*(3), 425 - 478.

ຕາຕະລາງ 1: ສະແດງຈຳນວນ ແລະ ສ່ວນຮ້ອຍດ້ານປັດໄຈສ່ວນບຸກຄົນ

ລ/ດ	**ດ້ານປັດໄຈສ່ວນບຸກຄົນ ຂອງຜູ້ປະກອບການ 180 ຄົນ**	ຈຳນວນ	ສ່ວນຮ້ອຍ (%)
1	ເພດສ່ວນໃຫຍ່ແມ່ນເພດຊາຍ	105	58.33
2	ອາຍຸສ່ວນໃຫຍ່ຢູ່ລະຫວ່າງ 31-40 ປີ (ສະເລ່ຍ 43.45 ປີ)	73	40.56
3	ສະຖານະພາບສ່ວນໃຫຍ່ແມ່ນແຕ່ງງານ	149	82.78
4	ລະດັບການສຶກສາສ່ວນໃຫຍ່ປະລິນຍາຕີ	96	58.33
5	ຮູບແບບກຳມະສິດສ່ວນໃຫຍ່ແມ່ນວິສາຫະກິດສ່ວນບຸກຄົນ	143	79.44
6	ຂະໜາດທຸລະກິດສ່ວນໃຫຍ່ແມ່ນຂະໜາດນ້ອຍ	128	71.71
7	ລາຍໄດ້ທຸລະກິດ ສູງກວ່າ 400 ລ້ານຕໍ່ເດືອນ (ສະເລ່ຍ 95.6 ລ້ານກີບຕໍ່ເດືອນ)	67	37.22
8	ໄລຍະເວລາດຳເນີນທຸລະກິດສະເລ່ຍ 7.96 ປີ	76	42.22
9	ການໃຊ້ບໍລິການການແຈ້ງມອບອຳນອນ ສ່ວນໃຫຍ່ແມ່ນແຈ້ງມອບອຳນອນຜ່ານ ລະບົບ TaxRIS ດ້ວຍຕົນເອງ	130	72.22

ຕາຕະລາງ 2: ສະແດງເຖິງ ຈຳນວນ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ລະດັບຄວາມຄິດເຫັນຂອງຜູ້ ປະກອບການໃນເມືອງໄຊແຂວງອຸດົມໄຊ ຕໍ່ຜົນສຳເລັດຂອງລະບົບ TaxRIS

ລ/ດ	ຜົນສຳເລັດຂອງລະບົບ TaxRIS	n	μ	S.D	ລະດັບຄວາມຄິດເຫັນ
1	ຄຸນນະພາບລະບົບ	180	4.02	0.55	ເຫັນດີຫຼາຍ
2	ຄຸນນະພາບຂໍ້ມູນ	180	3.95	0.55	ເຫັນດີຫຼາຍ
3	ຄຸນນະພາບໃຫ້ບໍລິການ	180	3.68	0.55	ເຫັນດີຫຼາຍ
4	ຄວາມຕັ້ງໃຈໃນການໃຊ້	180	4.16	0.60	ເຫັນດີຫຼາຍ
5	ຄວາມພໍ່ໃຈໃນການໃຊ້ງານ	180	3.99	0.56	ເຫັນດີຫຼາຍ
6	ປະໂຫຍດຂອງການໃຊ້	180	4.05	0.51	ເຫັນດີຫຼາຍ
	ລວມ	180	3.97	0.36	ເຫັນດີຫຼາຍ

ຕາຕະລາງທີ 3: ສະແດງເຖິງ ປັດໄຈທີ່ສົ່ງຜົນຕໍ່ການໃຊ້ບໍລິການແຈ້ງມອບອຳນອນຂອງຜູ້ປະກອບການຜ່ານລະບົບ TaxRIS ໃນເມືອງໄຊ ແຂວງອຸດົມໄຊ

ລ/ດ	ປັດໄຈການຍອມຮັບເຕັກໂນໂລຊີ	n	μ	S.D	ລະດັບຄວາມຄິດເຫັນ
1	ດ້ານຄວາມຄາດຫວັງເຖິງປະສິດທິພາບ	180	4.21	0.47	ເຫັນດີຫຼາຍທີ່ສຸດ
2	ດ້ານຄາດຫ້ອງການໃຊ້ງານງ່າຍ	180	3.99	0.50	ເຫັນດີຫຼາຍ
3	ດ້ານອິດທິພົນທາງສັງຄົມ,	180	3.97	0.71	ເຫັນດີຫຼາຍ
4	ດ້ານສະພາບແວດລ້ອມສະນັບສະໜູນ	180	4.09	0.68	ເຫັນດີຫຼາຍ
5	ດ້ານແຮງຈູງໃຈຄວາມມັກ	180	4.06	0.51	ເຫັນດີຫຼາຍ
6	ດ້ານມູນຄ່າລາຄາບໍລິການ	180	4.21	0.54	ເຫັນດີຫຼາຍທີ່ສຸດ
7	ດ້ານຄວາມເຄີຍຊິນ	180	3.90	0.56	ເຫັນດີຫຼາຍ
	ລວມ	180	4.06	0.44	ເຫັນດີຫຼາຍ

ຕາຕະລາງທີ 4: ສະແດງເຖິງ ຈຳນວນ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ລະດັບຄວາມຄິດເຫັນຂອງຜູ້ປະກອບການ ໃນເມືອງໄຊເຊຂອງອຸດົມໄຊ ຕໍ່ການຍອມຮັບເຕັກໂນໂລຊີ ໃນລະບົບ TaxRIS

Binary Probit marginal effects mean

Y=1, Pr=0.7806

ຕົວປ່ຽນ	dp/dx	Z	ຕົວປ່ຽນ	dp/dx	Z
ເພດ (X_1)	0.0293^{ns}	0.39	ດ້ານຄວາມຕັ້ງໃຈໃນການໃຊ້ງານ (X_{12})	-0.0002^{ns}	-0.002
ອາຍຸ (X_2)	-0.0007^{ns}	-0.17	ດ້ານຄວາມພໍໃຈໃນການໃຊ້ງານ (X_{13})	-0.276**	2.11
ສະຖານະພາບ (X_3)	0.2767**	2.51	ດ້ານຜົນປະໂຫຍດຂອງການໃຊ້ງານ (X_{14})	0.0285^{ns}	0.27
ລະດັບການສຶກສາ (X_4)	-0.0100^{ns}	-0.47	ດ້ານຄວາມຄາດຫວັງເຖິງປະສິດທິພາບ(X_{15})	-0.1293^{ns}	-0.94
ຮູບແບບກຳມະສິດ (X_5)	-0.0420^{ns}	-0.49	ດ້ານຄວາມຫວັງການໃຊ້ງານງ່າຍ (X_{16})	0.2129*	1.74
ຂະໜາດທຸລະກິດ (X_6)	0.1369*	1.84	ດ້ານອິດທິພົນທາງສັງຄົມ (X_{17})	0.3404**	2.51
ລາຍໄດ້ທຸລະກິດ (X_7)	-0.0307**	-2.14	ດ້ານສະພາບແວດລ້ອມສະໜັບສະໜູນ(X_{18})	-0.516***	-3.26
ໄລຍະເວລາດຳເນີນທຸລະກິດ(X_8)	0.0012^{ns}	-0.12	ດ້ານແຮງຈູງໃຈຄວາມມັກ (X_{19})	0.1742*	1.84
ດ້ານຄຸນນະພາບຂອງລະບົບ (X_9)	0.1809*	1.73	ດ້ານມູນຄ່າລາຄາບໍລິການ (X_{20})	0.2598***	2.83
ດ້ານຄຸນນະພາບຂອງຂໍ້ມູນຂ່າວສານ (X_{10})	-0.0881^{ns}	-0.76	ດ້ານຄວາມເຄີຍຊິນ (X_{21})	0.0627^{ns}	0.62
ດ້ານຄຸນນະພາບໃຫ້ບໍລິການ (X_{11})	0.0023^{ns}	0.03			

Percentage correctly=75.6%; R-squared=0.5997; Lo-likelihood=-81.90504;

Chi-squared (21) =48.8931[0.0005]